# San Diego Unified School District

EUGENE BRUCKER EDUCATION CENTER
4100 Normal Street, San Diego, CA 92103-2682
(619) 725-5506

**Carl A. Cohn**
Superintendent of Schools


**ເດືອນພຶສພາ, 2007**

ເຖິງພໍ່ແມ່/ຜູ້ປົກຄອງນັກຮຽນທີ່ນັບຖື,

ການເວລາລ່ວງໄປຢ່າງວ່ອງໄວໂດຍບໍ່ໜ້າເຊື່ອ, ໃນລະດູໃບໄມ້ປົ່ງນີ້ ຫ້ອງຮຽນສົກປີ 2020 ກໍ່ໄດ້ເລີ້ມຈົດຊື່ຈັບຈອງບ່ອນໄວ້ແລ້ວ. ບັນດາພໍ່ແມ່ທີ່ຈະເຂົ້າອະນຸບານເປັນພັນໆຄົນກໍ່ເລີ້ມພາກັນຈົດຊື່ໄວ້ຢ່າງຫ້າວຫັນ. ພວກເດັກອາຍຸຫ້າປີກໍ່ກຳລັງຊື່ນຊົມຕໍ່ການຈະໄດ້ມາເຂົ້າໂຮງຮຽນພວກເຮົາໃນລະດູໃບໄມ້ລົ່ນທີ່ຈະມາເຖິງນີ້. ເຊັ່ນດຽວກັບທ່ານ, ບັນດາພໍ່ແມ່ກໍ່ມີຄວາມຫວັງ ແລະ ຄາດຫມາຍອັນສູງສຳຫລັບເດັກຂອງທ່ານ. ດັ່ງດຽວກັບທ່ານ, ທີ່ມອບຜູ້ທີ່ຮັກແລະຖນຸຖນອມທີ່ສຸດໃນຄອບຄົວຂອງທ່ານ ໃຫ້ແກ່ໂຮງຮຽນຂອງພວກເຮົາສິດສອນດູແລ ແລະກຽມຄວາມຮູ້ໃຫ້ເພື່ອໄປເຂົ້າວິທຍາລັຍ, ກຽມຄວາມຮູ້ດ້ານວິຊາຊີບ, ເພື່ອໃຫ້ມີອະນາຄົດອັນກ້າວໜ້າ ແລະ ມີຊີວິດອັນແຈ່ມໃສທີ່ສຸດ. ບັນດາພໍ່ແມ່ຮູ້ດີວ່າການສຶກສານີ້ ບໍ່ພຽງແຕ່ເຮັດໃຫ້ຄວາມຝັນຄົນອະເມຣິກັນ ເປັນໄປໄດ້ເທົ່ານັ້ນ ແຕ່ມັນເປັນຄວາມຈິງສຳຫລັບເດັກຂອງເຂົາເຈົ້າ.

ບັນດາພໍ່ແມ່ ແລະ ຄຣູສອນຂອງພວກເຮົານັບເອົາທຸກວັນມີຄວາມສຳຄັນສຸດ. ຈາກຫ້ອງອະນຸບານເຖິງມັທຍົມພາກປາຍ, ວັນເຂົ້າໂຮງຮຽນ 2,340 ວັນຈະຜ່ານໄປຢ່າງວ່ອງໄວ –ເລີ້ມຈາກມັດສາຍເກີບໃຫມ່ໃນວັນເຂົ້າໂຮງຮຽນທຳອິດ ຈົນເຖິງວັນຮັບປະກາສນີບັດຈົບໂຮງຮຽນ. ລະຫວ່າງພິທີສຳຄັນຕ່າງໆມີລະຍະທາງ 13 ປີ, ການເດີນທາງແຫ່ງການສຶກສານັ້ນເຕັມໄປດ້ວຍປະສົບການທີ່ໃຫ້ຣາງວັນອັນລ້ຳຄ່າ ແລະ ໃຫ້ໂອກາດດີສຳຫລັບສຶກສາຮ່ຳຮຽນ ແລະ ສ້າງຄວາມກ້າວຫນ້າ. ຂ້າພະເຈົ້າຫວັງວ່າທ່ານຄົງຈະໄດ້ຮັບເອົາໂອກາດ, ເຂົ້າຮ່ວມພິທີການ ແລະ ການຮ່ຳຮຽນສ່ວນຫລາຍເຫລົ່ານັ້ນ, ແລະ ເຂົ້າຮ່ວມຢ່າງຈິງຈັງໃນການສຶກສາຂອງເດັກທ່ານ.

ປີນີ້ຄຣູອາຈານ ແລະ ພະນັກງານໂຮງຮຽນພວກເຮົາໄດ້ເຮັດວຽກຢ່າງອົດທົນເພື່ອເຮັດໃຫ້ສົມຄວາມຄາດຫມາຍອັນສູງ. ພວກເຮົາຕ້ອງການຊ່ອຍເຫລືອໃຫ້ເດັກແຕ່ລະຄົນບໍ່ພຽງແຕ່ໄດ້ຮຽນໃນວິຊາການເທົ່ານັ້ນ, ແຕ່ຢາກໃຫ້ເຂົາເຈົ້າໄດ້ຮັບຜົນປະໂຍດຈາກການສິດສອນທີ່ຖືກປັບປຸງແລ້ວທຸກໆວັນ.

ດັ່ງທີ່ພວກເຮົາກຳລັງມຸ້ງຫນ້າເຂົ້າສູ່ເດືອນສຳຄັນ ເດືອນມິຖຸນານີ້, ພວກມີຄວາມພໍອົກພໍໃຈທີ່ສຸດຕໍ່ການຊຸກຍູ້ຊ່ວຍເຫລືອຂອງທ່ານ. ການຊ່ວຍເຫລືອເດັກຢູ່ທີ່ບ້ານນັ້ນ ເປັນສິ່ງສຳຄັນສຸດໃຫ້ແກ່ທາງໂຮງຮຽນຂອງພວກເຮົາ. ເວລານີ້ເປັນເວລາທີ່ພວກນັກຮຽນຕ້ອງເອົາໃຈໃສ່ພິເສດໃນຫ້ອງຮຽນ; ກະກຽມໃສ່ການສອບເສັງຕ່າງໆ; ພັກຜ່ອນຫລັບນອນໃຫ້ພຽງພໍ; ຈຳກັດເວລາເບິ່ງໂທຣະທັດ, ຈຳກັດການຫລິ້ນອິນເຕີເນດ ແລະຫລິ້ນວີດີໂອເກມ; ແລະ ກວດເບິ່ງບົດຮຽນການບ້ານໃຫ້ສຳເຣັດຮຽບຮ້ອຍດີ. ຄວາມພຍາຍາມເພື່ອຮັບຜິດຊອບສິ່ງເຫລົ່ານີ້ຈະນຳໄປສູ່ຄວາມສຳເຣັດອັນສູງ, ຈະໄດ້ຮັບຄະແນນດີ ແລະ ຈະມີຄວາມຮູ້ສຶກຫມັ້ນໃຈຕໍ່ຄວາມສຳເຣັດຂອງຕົນເອງ.

ຂ້າພະເຈົ້າຂໍຊຸກຍູ້ໃຫ້ແນ່ໃຈ ເພື່ອໃຫ້ເດັກຂອງທ່ານຍາດເອົາການບໍຣິການຊ່ວຍເຫລືອອັນດີເລີດທີ່ພວກຂ້າພະເຈົ້າຈັດໃຫ້ຢູ່ໃນໂຮງຮຽນນີ້ຢ່າງເຕັມທີ່. ໃຫ້ເຂົ້າປະກອບສ່ວນ. ໃຫ້ເຂົ້າຮ່ວມພົວພັນ. ຮຽນຮູ້ທຸກໆຢ່າງສຸດຄວາມສາມາດຂອງທ່ານ. ພວກຂ້າພະເຈົ້າຢາກໃຫ້ທຸກໆຄົນທີ່ບໍຣິການຊ່ວຍເຫລືອນັ້ນໄດ້ຮັບຄວາມຊ່ວຍເຫລືອຄືກັນກັບຜູ້ທີ່ຮັກແພງຢູ່ໃນຄອບຄົວຂອງພວກຂ້າພະເຈົ້າເອງ. ຂໍຂອບໃຈພິເສດສຸດທີ່ທ່ານໄດ້ຊຸກຍູ້ໃຫ້ລູກຫລານຂອງທ່ານທຳການຮ່ຳຮຽນໃຫ້ໄດ້ດີທີ່ສຸດໃນລະຍະສອບເສັງລະດູໃບໄມ້ປົ່ງນີ້. ນີ້ຄືພວກເຮົາເອີ້ນວ່າການສ້າງຄວາມກ້າວຫນ້າ – ໃນຊີວິດການປະຈົນພັຍຢູ່ໃນໂຮງຮຽນ.

ດ້ວຍຄວາມນັບຖືຢ່າງສູງ,

**Carl A. Cohn**
**Superintendent of Schools**